ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ແຂວງ ບໍລິຄຳໄຊ
ພະແນກກະສິກຳ ແລະ ປ່າໄມ້

ເລກທີ : 306 /ກປຂ.ບຊ
ວັນທີ: 05/03/2021

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: ບັນດາບໍລິສັດກໍ່ສ້າງ ແລະ ສ້ອມແປງຊົນລະປະທານ ທີ່ນັບຖື,

1. ພະແນກກະສິກຳ ແລະ ປ່າໄມ້ ແຂວງ ບໍລິຄຳໄຊ ໂຄງການຜະລິດກະສິກຳເປັນສິນຄ້າຢູ່ ສປປ ລາວ ໄດ້ຮັບອະນຸມັດງົບປະມານທຶນກູ້ຢືມຈາກທະນາຄານໂລກ ເລກທີ P 61473 ເພື່ອດຳເນີນການ ສ້ອມແປງຊົນລະປະທານຈັກສູບນ້ຳ ປາກປຶງ 1-3 ດ້ວຍການປະມູນສົມທຽບລາຄາ ດ້ວຍການສະເໜີໃຫ້ຍື່ນການສົມທຽບລາຄາ.

2. ພະແນກກະສິກຳ ແລະ ປ່າໄມ້ ແຂວງບໍລິຄຳໄຊ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ ສຳລັບການສ້ອມແປງຊົນລະປະທານຈັກສູບນ້ຳ ປາກປຶງ 1-3 ດັ່ງກ່າວ. ໄລຍະການກໍ່ສ້າງ ແລະ ການສ້ອມແປງແມ່ນ 150 ວັນ.

3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທີ 24 ມິຖຸນາ 2019.

4. ຊອງປະມູນຕ້ອງສົ່ງທີ່ຫ້ອງການປະສານງານໂຄງການ ຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ ປະຈຳແຂວງບໍລິຄຳໄຊ, ພະແນກກະສິກຳ ແລະ ປ່າໄມ້ ແຂວງບໍລິຄຳໄຊ ຢູ່ທີ່ ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ໂທລະສັບ 054 211079 ກ່ອນເວລາ 10:00 ໂມງຂອງວັນທີ 23/03/2021 ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 10:15 ໂມງ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈຢາກເຂົ້າຮ່ວມ.

ຂໍສະແດງຄວາມນັບຖື

ຫົວໜ້າພະແນກ

ຫ້ອງການກະສິກຳແລະປ່າໄມ້
ພະແນກ
ກະສິກຳແລະປ່າໄມ້
ແຂວງ ບໍລິຄຳໄຊ

ຊາຍຄຳ ກຸນນາວົງ